# ຮູ້ຈັກສິດຕ່າງໆຂອງທ່ານ

VOTE 2026

*ໃນຖານະຜູ້ມີສິດເລືອກຕັ້ງໃນລັດ Minnesota, ທ່ານມີສິດຫຼາຍຢ່າງ - ມາທຳຄວາມຮູ້ຈັກສິດຕ່າງໆເຫຼົ່ານັ້ນເລີຍ!*

## *ການລາພັກວຽກເພື່ອໄປລົງຄະແນນສຽງ*

ທ່ານມີສິດທີ່ຈະລາພັກວຽກເພື່ອໄປລົງຄະແນນສຽງໄດ້ທຸກເວລາໃນລະຫວ່າງໄລຍະການລົງຄະແນນສຽງລ່ວງໜ້າ ຫຼື ໃນວັນເລືອກຕັ້ງໂດຍບໍ່ຖືກຕັດເງິນເດືອນ, ການລາພັກສ່ວນຕົວ ຫຼື ວັນພັກຂອງທ່ານ.

## *ລົງຄະແນນສຽງໄດ້ ຖ້າມາລຽນແຖວກ່ອນ 8 ໂມງແລງ*

ທ່ານມີສິດລົງຄະແນນສຽງໄດ້ ຖ້າທ່ານມາເຂົ້າແຖວເພື່ອລົງຄະແນນສຽງກ່ອນ 8 ໂມງແລງ.

## *ລົງທະບຽນໃນມື້ເລືອກຕັ້ງ*

ທ່ານມີສິດລົງທະບຽນລົງຄະແນນສຽງໃນວັນເລືອກຕັ້ງ ຖ້າທ່ານສາມາດສະແດງເອກະສານຫຼັກຖານຢັ້ງຢືນທີ່ຢູ່ອາໄສທີ່ຕ້ອງການໄດ້.

## *ລົງຊື່ແບບປາກເປົ່າ*

ທ່ານມີສິດທີ່ຈະຢືນຢັນດ້ວຍແບບປາກເປົ່າວ່າທ່ານແມ່ນໃຜ ແລະ ຂໍໃຫ້ບຸກຄົນອື່ນເຊັນແທນທ່ານໄດ້ ຖ້າທ່ານບໍ່ສາມາດເຊັນຊື່ຂອງທ່ານໄດ້.

### *ວັນທີຕ່າງໆໃນປີ 2026*

***ລົງຄະແນນສຽງລ່ວງໜ້າ***
*26 ມິຖຸນາ - 10 ສິງຫາ*

*ລົງທະບຽນລ່ວງໜ້າ*
*ພາຍໃນວັນທີ 21 ກໍລະກົດ*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, 11 ສິງຫາ*

***ລົງຄະແນນສຽງລ່ວງໜ້າ***
*18 ກັນຍາ - 2 ພະຈິກ*

*ລົງທະບຽນລ່ວງໜ້າ*
*ພາຍໃນວັນທີ 13 ຕຸລາ*

***ມື້ເລືອກຕັ້ງ***
*ວັນອັງຄານ, 3 ພະຈິກ*

## *ຂໍຄວາມຊ່ວຍເຫຼືອ*

ທ່ານມີສິດທີ່ຈະຂໍຄວາມຊ່ວຍເຫຼືອຈາກບຸກຄົນໃດໜຶ່ງໄດ້, ຍົກເວັ້ນພະນັກງານຂອງນາຍຈ້າງ ຫຼື ສະຫະພາບແຮງງານຂອງທ່ານ. ບໍ່ມີຂໍ້ຈຳກັດວ່າບຸກຄົນໃດໜຶ່ງຈະສາມາດຊ່ວຍຜູ້ມີສິດເລືອກຕັ້ງໄດ້ຈັກຄົນ.

## *ພາເດັກນ້ອຍໄປທີ່ສູນເລືອກຕັ້ງ*

ທ່ານມີສິດທີ່ຈະພາລູກຂອງທ່ານໄປນຳໃນເວລາໄປລົງຄະແນນສຽງ.

*ສືບຕໍ່ຢູ່ດ້ານຫຼັງ...*

**ສຳນັກງານເລຂາທິການລັດ Minnesota**
*mnvotes.gov • ໂທ: 1-877-600-VOTE • ຂໍ້ຄວາມ: 651-217-3862*

# ຮູ້ຈັກສິດຕ່າງໆຂອງທ່ານ

*...ຕໍ່ຈາກທາງໜ້າ*

## *ລົງຄະແນນສຽງ ຖ້າທ່ານບໍ່ໄດ້ຖືກຄຸມຂັງຍ້ອນການຖືກຕັດສິນວ່າມີຄວາມຜິດທາງອາຍາ*

ຖ້າທ່ານເຄີຍຖືກຕັດສິນວ່າມີຄວາມຜິດທາງອາຍາ, ທ່ານສາມາດລົງຄະແນນສຽງໄດ້ ຖ້າທ່ານຍັງບໍ່ຖືກຄຸມຂັງຢູ່ໃນຂະນະນີ້ຍ້ອນການກະທຳຜິດທາງອາຍາດັ່ງກ່າວ.

## *ລົງຄະແນນສຽງໄດ້ ຖ້າຢູ່ພາຍໃຕ້ການດູແລຂອງຜູ້ປົກຄອງ*

ທ່ານມີສິດທີ່ຈະລົງຄະແນນສຽງໄດ້ ຖ້າທ່ານຢູ່ພາຍໃຕ້ການດູແລຂອງຜູ້ປົກຄອງ, ເວັ້ນເສຍແຕ່ວ່າຜູ້ພິພາກສາຫາກໄດ້ຍົກເລີກສິດໃນການລົງຄະແນນສຽງຂອງທ່ານແລ້ວເທົ່ານັ້ນ.

## *ລົງຄະແນນສຽງໄດ້ ໂດຍປາສະຈາກອິດທິພົນ*

ທ່ານມີສິດທີ່ຈະລົງຄະແນນສຽງໄດ້ໂດຍທີ່ບໍ່ມີບຸກຄົນໃດໜຶ່ງຢູ່ໃນສະຖານທີ່ເລືອກຕັ້ງຈະພະຍາຍາມໃຊ້ອິດທິພົນຕໍ່ການລົງຄະແນນສຽງຂອງທ່ານ.

## *ຮັບບັດລົງຄະແນນສຽງທົດແທນ*

ທ່ານມີສິດທີ່ຈະໄດ້ຮັບບັດລົງຄະແນນສຽງທົດແທນໄດ້ ຖ້າທ່ານໝາຍບັດລົງຄະແນນສຽງຜິດກ່ອນທີ່ທ່ານຈະລົງຄະແນນສຽງ.

## *ຍື່ນຄຳຮ້ອງຮຽນ*

ທ່ານມີສິດທີ່ຈະຍື່ນຄຳຮ້ອງທຸກເປັນລາຍລັກອັກສອນຢູ່ໜ່ວຍເລືອກຕັ້ງຂອງທ່ານ ຖ້າທ່ານບໍ່ເພິ່ງພໍໃຈກັບວິທີການເລືອກຕັ້ງທີ່ກຳລັງດຳເນີນຢູ່.

## *ຖືບັດລົງຄະແນນສຽງຕົວຢ່າງມານຳ*

ທ່ານມີສິດທີ່ຈະຖືບັດລົງຄະແນນສຽງຕົວຢ່າງເຂົ້າໄປໃນຫ້ອງລົງຄະແນນສຽງໄດ້.

## *ຖືປຶດບັນຍັດວ່າດ້ວຍສິດທິຂອງຜູ້ມີສິດເລືອກຕັ້ງມານຳ*

ທ່ານມີສິດທີ່ຈະນຳສຳເນົາເອກະສານນີ້ເຂົ້າໄປໃນຫ້ອງລົງຄະແນນສຽງໄດ້.

*ສະແກນລະຫັດນີ້ເພື່ອເຂົ້າໄປທີ່ mnvotes.gov*
*ແລະ ລົງທະບຽນເພື່ອລົງຄະແນນສຽງ!*